# ບົດສະຫຼຸບ ໂຄງການ ໂດຍຫຍໍ້: “ການປະເມີນ ກອບນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ສິ່ງແວດລ້ອມ ແລະ ທີ່ດິນ, ຊ່ອງວ່າງ ແລະ ຄວາມຕ້ອງການ ຂອງຜູ້ມີສ່ວນຮ່ວມ ໃນການລົງທຶນທາງດ້ານກະສິກຳ ໃນ ສປປ ລາວ (ໂຄງການ E-RAI)

ກຸມພາ 2019



Deutsche Gesellschaft für Internationale Zusammenarbeit (GIZ) GmbH

Village Focus International

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

ໂຄງການສົ່ງເສີມ ການຮຽນຮູ້ກ່ຽວກັບທີ່ດິນ LIFE

## ສາລະບານ

ພາກສະເໜີ . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . 3

ການວິເຄາະກອບກົດໝາຍ ແລະ ລະບຽບການໃນລາວ . . . . . . . . . . . . . . . . . . . . . . . . . . . . . . . . . . . . 4

ການປະເມີນຜົນກະທົບດ້ານສິ່ງແວດລ້ອມ, ຊ່ອງວ່າງ ແລະ ຄວາມຕ້ອງການຂອງຜູ້ທີ່ມີສ່ວນຮ່ວມໃນ
ການລົງທຶນດ້ານການກະສິກຳ . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . 5

ການສຳຫຼວດ ແລະ ສ້າງບັນຊີບາງໂຄງການກ່ຽວກັບສິ່ງແວດລ້ອມຊົນນະບົດ . . . . . . . . . . . . . . . . . . . . . . .. . . . . . . . 8

ການລວບລວມເຄື່ອງມືການຝຶກອົບຮົມ ແລະ ຫຼັກສູດການສອນບາງຈຳນວນທີ່ກ່ຽວກັບຫົວຂໍ້
ສິ່ງແວດລ້ອມ ແລະ ການລົງທຶນ . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .10

**ອະທິບາຍຮູບຈາກໜ້າປົກ:** ຊາວກະສິກອນອະນາໄມສວນກ້ວຍ ຫຼັງຈາກນັກລົງທຶນໜີຈາກພື້ນທີ່ສຳປະທານກ່ອນກຳນົດ ທີ່ເມືອງສິງ, ແຂວງ ຫຼວງນ້ຳທາ

ພາຍໂດຍ: Christina Cilento

## ພາກສະເໜີ

ໃນປັດຈຸບັນ ການລົງທຶນທາງດ້ານກະສິກຳໃນການຜະລິດພືດເສດຖະກິດໄດ້ເພີ່ມຂຶ້ນຢ່າງວ່ອງໄວຢູ່ໃນ ສປປ ລາວ (ລາວ), ນຳມາຊຶ່ງການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການພັດທະນາທາງດ້ານເສດຖະກິດ - ສັງຄົມ ໃຫ້ແກ່ຊຸມຊົນທີ່ຢູ່ໃນທ້ອງຖິ່ນຊົນນະບົດ. ແຕ່ໄປຄຽງຄູ່ກັນນັ້ນມັນກໍ່ໄດ້ເຮັດໃຫ້ເກີດມີ ຜົນກະທົບທາງລົບດ້ານສັງຄົມ ແລະສິ່ງແວດລ້ອມເຊັ່ນດຽວກັນ. ລັດຖະບານລາວ, ບັນດາຄູ່ຮ່ວມພັດທະນາ ແລະ ຊຸມຊົນທ້ອງຖິ່ນ ໄດ້ສະແດງຄວາມກັງວົນຂອງພວກເຂົາ ຕໍ່ກັບຜົນກະທົບດ້ານສິ່ງແວດລ້ອມຈາກການລົງທຶນດ້ານກະສິກຳ. ຜົນກະທົບເຫຼົ່ານີ້ປະກອບມີການຕັດໄມ້ທຳລາຍປ່າ, ດິນເຈື່ອນ ຫຼື ການເຊື່ອມຄຸນນະພາບຂອງດິນ, ການປົນເປື້ອນຂອງແຫລ່ງນ້ຳໃຊ້, ການຢູ່ໃກ້ຊິດກັບສານເຄມີທີ່ບໍ່ປອດໄພ, ມົນລະພິດທາງອາກາດ ແລະອື່ນໆ. ລາວໄດ້ມີການຫັນປ່ຽນຈາກການຜະລິດແບບກຸ້ມຢູ່ກຸ້ມກິນໄປສູ່ການຜະລິດກະສິກຳເພື່ອເປັນສິນຄ້າ, ຄຽງຄູ່ກັບການເພີ່ມຂຶ້ນຂອງເນື້ອທີ່ທຳການຜະລິດແບບສັນຍາກະສິກຳ, ຊຶ່ງໄດ້ກໍ່ໃຫ້ເກີດມີຄວາມທ້າທາຍໃນການກຳນົດລະບຽບກົດໝາຍເພື່ອຄຸ້ມຄອງການລົງທຶນ ແລະ ບັງຄັບໃຊ້ມາດຕະຖານດ້ານສິ່ງແວດລ້ອມ.

ຈາກສະພາບການດັ່ງກ່າວ ແຜນງານທີ່ດິນ ລາວ - ເຢຍລະມັນ ໄດ້ລິເລີ່ມໂຄງການ E-RAI ເພື່ອສຶກສາປະເດັນຕ່າງໆທີ່ກ່ຽວຂ້ອງກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການລົງທຶນທາງດ້ານກະສິກຳ ໂດຍສະເພາະ ມັນໄດ້ສຸມໃສ່ຄວາມໝັ້ນຄົງທາງດ້ານການຄອບຄອງນຳໃຊ້ທີ່ດິນໃນແຂວງພາກເໜືອຂອງລາວ.

ໂຄງການ E-RAI ໄດ້ເລີ່ມຈັດຕັ້ງປະຕິບັດຕັ້ງແຕ່ເດືອນ ກໍລະກົດ ປີ 2018 ຫາເດືອນ ກຸມພາ ປີ 2019 ໂດຍອົງການຈັດຕັ້ງສັງຄົມ (CSO) ໃນລາວ ກໍ່ຄື ອົງການບ້ານຈຸດສຸມສາກົນ (VFI), ຊຶ່ງໄດ້ຮັບການສະໜັບສະໜູນຈາກແຜນງານທີ່ດິນຂອງ GIZ ໃນປະເທດລາວ ຊຶ່ງເປັນຜູ້ຕາງໜ້າໃຫ້ ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນສາທາລະນະລັດເຢຍລະມັນ (ຫຼັງຈາກນີ້ຈະເອີ້ນວ່າ BMZ), ພາຍໃຕ້ການຮ່ວມມືກັບ ກະຊວງແຜນການ ແລະ ການລົງທຶນ (MPI), ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (FEB) ຂອງມະຫາວິທະຍາໄລແຫ່ງຊາດລາວ (NUoL), ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແລະ ໂຄງການລິເລີ່ມ LIFE ຂອງ LIWG.

ບົດສະຫຼຸບໂຄງການໂດຍຫຍໍ້ສະບັບນີ້ ໄດ້ຮວບຮວມຜົນການຄົ້ນຄວ້າ ແລະ ຂໍ້ສະເໜີແນະຫຼັກ ຂອງໂຄງການ E-RAI ພາຍໃຕ້ຫົວຂໍ້ທີ່ສຳຄັນ ສີ່ ຫົວຂໍ້ ຄື:

1. ການວິເຄາະກອບກົດໝາຍ ແລະ ລະບຽບການໃນ ສປປ ລາວ;
2. ການປະເມີນຜົນກະທົບດ້ານສິ່ງແວດລ້ອມ, ຊ່ອງວ່າງ ແລະ ຄວາມຕ້ອງການຂອງຜູ້ທີ່ມີສ່ວນຮ່ວມໃນການລົງທຶນດ້ານກະສິກຳ;
3. ການສຳຫຼວດ ແລະ ສ້າງບັນຊີບັນດາໂຄງການສິ່ງແວດລ້ອມຊົນນະບົດ;
4. ການລວບລວມເຄື່ອງມືການຝຶກອົບຮົມ ແລະ ຫຼັກສູດການສອນ ກ່ຽວກັບສິ່ງແວດລ້ອມ ແລະ ການລົງທຶນ.



ອ້ອຍຢູ່ຊາຍແດນ ລາວ-ຈີນ ທີ່ເມືອງສິງ, ແຂວງ ຫຼວງນ້ຳທາ
ພາຍໂດຍ: Christina Cilento

## ການວິເຄາະກອບກົດໝາຍ ແລະ ລະບຽບການໃນລາວ

ບົດສະຫຼຸບຫຍໍ້ພາກນີ້ ໄດ້ສັງລວມຜົນໄດ້ຮັບຕົ້ນຕໍ ຂອງການວິເຄາະກອບກົດໝາຍ ແລະ ລະບຽບການໃນລາວ ໂດຍໂຄງການ E-RAI. ທີມງານຂອງອົງການບ້ານຈຸດສຸມ ໄດ້ວິເຄາະກົດໝາຍພາຍລາວໃນເປັນຈຳນວນຫລາຍກວ່າ 40 ລາຍການ ໂດຍ ໄດ້ວິເຄາະພາຍໃຕ້ຫົວຂໍ້ຍ່ອຍຕົ້ນຕໍ 4 ຫົວຂໍ້ ຄື: ການລົງທຶນ, ສິ່ງແວດລ້ອມ, ທີ່ດິນ, ກະສິກຳ / ປ່າໄມ້.

ນິຕິກຳພາຍໃນປະເທດພາຍໃຕ້ຫົວຂໍ້ຍ່ອຍເຫຼົ່ານີ້ ໄດ້ກໍ່ໃຫ້ເກີດເປັນເຄືອຂ່າຍຂອງນິຕິກຳທີ່ມີຄວາມເຊື່ອມໂຍງກັນ ແລະ ຄອບຄຸມນິຕິກຳຫຼາຍປະເພດຢ່າງກວ້າງຂວາງ ນັບຕັ້ງແຕ່ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນຈັດຕັ້ງປະຕິບັດ, ດຳລັດ, ຄຳສັ່ງ ແລະ ຄຳແນະນຳຕ່າງໆ. ທີມງານໄດ້ວິເຄາະຊ່ອງວ່າງ ພ້ອມທັງຈຸດແຂງຂອງກອບນິຕິກຳດັ່ງກ່າວ. ບາງຜົນໄດ້ຮັບຕົ້ນຕໍ ແລະ ແຜນການທີ່ສະເໜີເພື່ອປິດຊ່ອງຫວ່າງດ້ານກົດໝາຍ ໄດ້ມີການສັງລວມໃຫ້ເຫັນຢູ່ຂ້າງລຸ່ມນີ້:

- ມີການປ່ຽນແປງທີ່ສຳຄັນຫຼາຍຢ່າງພວມເກີດຂຶ້ນ ໃນກອບກົດໝາຍ ແລະ ລະບຽບການ. ກົດໝາຍສຳຄັນ 2 ສະບັບແມ່ນຢູ່ໃນໄລຍະປັບປຸງ ກໍ່ຄື ກົດໝາຍ ວ່າດ້ວຍປ່າໄມ້ (2007) ແລະ ກົດໝາຍ ວ່າດ້ວຍທີ່ດິນ (2003), ໃນຂະນະທີ່ ກົດໝາຍ ວ່າດ້ວຍກະສິກຳ (1998) ຍັງບໍ່ໄດ້ຮັບການປັບປຸງ. ດຳລັດຈັດຕັ້ງປະຕິບັດ, ຄຳສັ່ງ ແລະ ຄຳແນະນຳ ຈະຖືກປັບປຸງເມື່ອມີການຜ່ານກົດໝາຍເຫຼົ່ານີ້ກ່ອນ. ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ເລກທີ 19/ສພຊ, 2012) ໄດ້ກຳນົດການມີສ່ວນຮ່ວມຂອງປະຊາຊົນໃນລະຫວ່າງຂະບວນການຮ່າງກົດໝາຍເຫຼົ່ານີ້ ເຊິ່ງມີຄວາມຈຳເປັນເພື່ອຮັບປະກັນວ່າກົດໝາຍດັ່ງກ່າວຈະສະທ້ອນໃຫ້ເຫັນເຖິງສະພາບຄວາມເປັນຈິງໃນຂັ້ນຮາກຖານ.

- ຄວນມີການຮັບຟັງຂໍ້ມູນຢ່າງຕັ້ງໜ້າຈາກຫນ່ວຍງານພາກລັດຂັ້ນທ້ອງຖິ່ນ (ເມືອງ ແລະ ແຂວງ) ແລະ ປະສານເຂົ້າໄປໃນຂະບວນການສ້າງກົດໝາຍ, ເພື່ອຮັບປະກັນວ່ານິຕິກຳທີ່ສ້າງຂຶ້ນ ມີຄວາມແທດເໝາະ, ສາມາດນຳໃຊ້ໄດ້ສະພາບການຂອງທ້ອງຖິ່ນ ແລະ ລະບຽບການດັ່ງກ່າວ ຈະໄດ້ຮັບການຕີຄວາມໝາຍຢ່າງສອດຄ່ອງກັນໃນທຸກພື້ນທີ່ໃນຂັ້ນທ້ອງຖິ່ນ ແລະ ສາມາດບັງຄັບໃຊ້ໄດ້ຈິງ.

- ອົງການຈັດຕັ້ງພາກລັດ ແລະ ພາກສ່ວນກ່ຽວຂ້ອງໃນຂົງເຂດພັດທະນາ ໄດ້ມີຄວາມພະຍາຍາມ ເພື່ອຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບທາງດ້ານສິ່ງແວດລ້ອມ ຈາກການລົງທຶນທາງດ້ານກະສິກຳ. ໃນຊຸມປີຜ່ານມາໄດ້ມີການອອກນິຕິກຳທີ່ເຂັ້ມແຂງຫຼາຍສະບັບ ເຊັ່ນ ດຳລັດ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ (2017), ການປັບປຸງ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (2016) ແລະ ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນໄລຍະໃໝ່ (2017). ນິຕິກຳທີ່ສ້າງຂຶ້ນໃຫມ່ ແລະ ຖະແຫຼງການຕໍ່ສາທາລະນະຂອງລັດຖະບານ ຍັງໄດ້ສົ່ງເສີມການຫັນປ່ຽນຈາກການຈັດຫາທີ່ດິນຂະຫນາດໃຫຍ່ (ກໍ່ຄື ການສຳປະທານ) ໄປສູ່ຮູບແບບການລົງທຶນທີ່ມີປະສິດທິພາບຫລາຍຂຶ້ນ ເຊັ່ນ ການເຊົ່າທີ່ດິນຂະຫນາດນ້ອຍ (ຮູບແບບ 1 + 4) ແລະ ການເຮັດສັນຍາກະສິກຳ (ຮູບແບບ 2 + 3).

- ເຖິງຢ່າງໃດກໍຕາມ ຍັງມີຊ່ອງຫວ່າງໃນກອບກົດໝາຍຄື ໃນປັດຈຸບັນຍັງບໍ່ມີກົດໝາຍກ່ຽວກັບສັນຍາກະສິກຳເທື່ອ. ເຖິງວ່າຈະມີກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ (ສະບັບເລກທີ 01/ສພຊ, 2008) ແຕ່ວ່າມັນກໍ່ບໍ່ໄດ້ຄຸ້ມຄອງແບບສະເພາະເຈາະຈົງ ຕໍ່ການເຮັດສັນຍາສຳຫຼັບການຜະລິດທາງດ້ານກະສິກຳລະຫວ່າງຜູ້ຜະລິດ, ພໍ່ຄ້າ ຫຼື ນັກລົງທຶນເທື່ອ. ຕໍ່ກັບບັນຫານີ້ ຈຶ່ງມີຄວາມຈຳເປັນ ໃນການພັດທະນາກົດໝາຍດັ່ງກ່າວ ໂດຍນຳໃຊ້ວິທີການແບບມີສ່ວນຮ່ວມຂອງຜູ້ກ່ຽວຂ້ອງຈາກຫຼາຍພາກສ່ວນ.

- ກົນໄກການບັງຄັບໃຊ້ກົດໝາຍຕໍ່ກັບສັນຍາກະສິກຳ ຍັງບໍ່ມີຄວາມຈະແຈ້ງ, ຫມາຍຄວາມວ່າບົດລົງໂທດຕໍ່ການລົງທຶນທີ່ບໍ່ມີຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແມ່ນຍັງມີລັກສະນະສະເພາະກິດ ແລະ ການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍແກ່ຄູ່ສັນຍາ ແມ່ນຍັງຈຳກັດ. ກົດໝາຍກ່ຽວກັບສັນຍາກະສິກຳ ທີ່ຈະແຈ້ງ ແລະ ສະເພາະເຈາະຈົງ ຈະສາມາດຊ່ວຍແກ້ໄຂຊ່ອງຫວ່າງນີ້ໄດ້.

- ກອບນິຕິກຳທີ່ຕິດພັນກັບການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ແມ່ນມີຄວາມເຂັ້ມແຂງ ຊຶ່ງສະແດງໄດ້ຈາກບັນດານິຕິກຳຫຼາຍສະບັບ ທີ່ກຳນົດ ແລະ ຄຸ້ມຄອງການປະເມີນຜົນກະທົບ. ແຕ່ເຖິງຢ່າງໃດກໍ່ຕາມ ນິຕິກຳເຫຼົ່ານີ້ພຽງແຕ່ຄຸ້ມຄອງການລົງທຶນສຳປະທານຂະຫນາດໃຫຍ່ເທົ່ານັ້ນ ໂດຍຍັງບໍ່ທັນໄດ້ຄອບຄຸມໄປເຖິງການເຮັດສັນຍາກະສິກຳເທື່ອ. ໃບຢັ້ງຢືນດ້ານສິ່ງແວດລ້ອມ (ທີ່ອອກໃຫ້ໂດຍອົງການທີ່ກ່ຽວຂ້ອງພາກລັດ ພາຍຫຼັງທີ່ໄດ້ກວດກາບົດລາຍງານ ESIA ຢ່າງຖືກຕ້ອງ ແລະ ເປັນທີ່ພໍໃຈ, ແລະ ຈາກນັ້ນຈະຖືກຕິດຄັດໃສ່ກັບສັນຍາສຳປະທານ) ກໍ່ບໍ່ໄດ້ຖືກກຳນົດສຳຫຼັບການລົງທຶນໃນການເຮັດສັນຍາກະສິກຳ. ສິ່ງດັ່ງກ່າວນີ້ ຖືເປັນ ຊ່ອງຫວ່າງໃນກອບກົດໝາຍໃນປະຈຸບັນ.

- ໃນໄລຍະຜ່ານມາ, ພາກລັດໄດ້ຕອບສະໜອງຕໍ່ຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ໂດຍການຫ້າມປູກພືດເສດຖະກິດບາງຊະນິດ (ເຊັ່ນ: ຢາງພາລາ, ໄມ້ວິກ, ຫມາກກ້ວຍ). ໃນຂະນະທີ່ວິທີການດັ່ງກ່າວມີເຈດຕະນາທີ່ດີ, ແຕ່ກໍ່ມີຜົນກະທົບທີ່ບໍ່ໄດ້ຄາດຫວັງເກີດຂຶ້ນ ກໍ່ຄືມັນໄດ້ເຮັດໃຫ້ມີການປ່ຽນແປງທາງດ້ານນິຕິກຳ ຢ່າງຕໍ່ເນື່ອງລຽນຕິດ ແລະ ບາງຄັ້ງກໍ່ໃຫ້ເກີດຄວາມສັບສົນຕໍ່ກັບລະບຽບກົດໝາຍ, ເຊິ່ງອາດສ້າງຄວາມເສຍຫາຍຕໍ່ຄວາມເຊື່ອຫມັ້ນຂອງນັກລົງທຶນ ແລະ ຜູ້ຜະລິດຂະໜາດນ້ອຍ ໃນການລົງທຶນທາງດ້ານກະສິກຳໃນໄລຍະຍາວ. ຕໍ່ກັບບັນຫານີ້ ຄວນມີການພິຈາລະນາມາດຕະການທາງດ້ານກົດໝາຍແບບອື່ນໆ ເພື່ອຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.

## ການປະເມີນຜົນກະທົບດ້ານສິ່ງແວດລ້ອມ, ຊ່ອງວ່າງ ແລະ ຄວາມຕ້ອງການຂອງຜູ້ທີ່ມີສ່ວນຮ່ວມໃນການລົງທຶນດ້ານການກະສິກຳ

ຈຸດປະສົງຂອງການປະເມີນນີ້ແມ່ນເພື່ອ:

- ອະທິບາຍສະຖານະການປະຈຸບັນຂອງຜົນກະທົບດ້ານສິ່ງແວດລ້ອມທີ່ເກີດຈາກການລົງທຶນດ້ານກະສິກຳຢູ່ພາກເຫນືອຂອງລາວ;
- ລະບຸຊ່ອງຫວ່າງທີ່ສຳຄັນ ແລະ ຄວາມຕ້ອງການຂອງພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງຂອດການວາງແຜນ, ຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບດັ່ງກ່າວ;
- ປະເມີນຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກລົງທຶນ, ອົງການການປົກຄອງທ້ອງຖິ່ນ ແລະ ຊຸມຊົນກ່ຽວກັບກົດໝາຍ ແລະ ລະບຽບການຂອງລາວ ທີ່ຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ການລົງທຶນທາງດ້ານກະສິກຳ;
- ສະເໜີຄຳແນະນຳໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທັງໝົດທີ່ປະກອບສ່ວນເຂົ້າໃນການສົ່ງເສີມທາງດ້ານນະໂຍບາຍ ແລະ ການຈັດຕັ້ງປະຕິບັດການລົງທຶນດ້ານກະສິກຳໃນປະເທດລາວ ໃຫ້ມີຄວາມຍືນຍົງຕໍ່ກັບສິ່ງແວດລ້ອມ.

ການສຳຫຼວດພາກສະໜາມສຳລັບການປະເມີນນີ້ໄດ້ດຳເນີນຢູ່ ແຂວງຫົວພັນ, ອຸດົມໄຊ ແລະ ຫຼວງນ້ຳທາ ໃນລະຫວ່າງວັນທີ 29 ຕຸລາ ເຖິງ ວັນທີ 17 ພະຈິກ ປີ 2019 (ເບິ່ງແຜນທີ່ຂ້າງນີ້). ອົງການ VFI ໄດ້ດຳເນີນການຄົ້ນຄວ້າຮ່ວມກັບທີມວິໄຈຂະໜາດນ້ອຍຈາກຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (FEB) ຂອງມະຫາວິທະຍາໄລແຫ່ງຊາດລາວ (NUoL), ອົງການຈັດຕັ້ງຕາມສາຍຕັ້ງຂອງ ກະຊວງແຜນການ ແລະ ການລົງທຶນ ແລະ ໄດ້ຮັບການສະຫນັບສະຫນູນຈາກແຜນງານທີ່ດິນຂອງ GIZ ໃນລາວ.




ບົດລາຍງານສະບັບນີ້ ໄດ້ສຶກສາກ່ຽວກັບ ການປູກພືດເສດຖະກິດໃນຮູບແບບ ທຸລະກິດສັນຍາກະສິກຳ ແລະ ສຳປະທານ. ທີມງານໄດ້ເກັບກຳຂໍ້ມູນຈາກຜູ້ທີ່ກ່ຽວຂ້ອງຈາກ ໜ່ວຍງານພາກລັດໃນຂັ້ນແຂວງ ແລະ ເມືອງ, ຜູ້ຕາງໜ້ານັກລົງທຶນດ້ານກະສິກຳ 9 ແຫ່ງ[1] ແລະ ຊຸມຊົນຈາກ 16 ບ້ານ. ການລົງທຶນດ້ານການກະສິກຳທີ່ລວມຢູ່ໃນການປະເມີນຄັ້ງນີ້ ປະກອບມີ:

- ບໍລິສັດກາເຟສັນຊາດອາເມລິກາ 1 ແຫ່ງ;
- ທຸລະກິດກະສິກຳໃນປະເທດ ທີ່ໄດ້ລົງທຶນໃນການປູກສາລີ ແລະ ກາເຟ 1 ແຫ່ງ;
- ບໍລິສັດຮ່ວມທຶນດ້ານກະສິກຳລາວ - ຫວຽດນາມ ຊຶ່ງໄດ້ມີການລົງທຶນໃນການປູກໄມ້ໄຜ່ ແລະ ລ້ຽງສັດ 1 ແຫ່ງ;
- ບໍລິສັດຢາງພາລາທີ່ຈີນເປັນເຈົ້າຂອງ ແລະ ດຳເນີນງານ 3 ແຫ່ງ;
- ບໍລິສັດປູກກ້ວຍຂອງຈີນທີ່ຮ່ວມທຶນລະຫວ່າງລັດ ແລະ ເອກະຊົນ 1 ແຫ່ງ;
- ທຸລະກິດກະສິກຳຂອງຈີນ ທີ່ມີການລົງທຶນໃນການປູກອ້ອຍ 1 ແຫ່ງ; ແລະ
- ທຸລະກິດກະສິກຳຂອງຈີນ ທີ່ມີການລົງທຶນໃນການລ້ຽງສັດ ແລະ ຜະລິດອາຫານສັດ 1 ແຫ່ງ.

1. ໃນບົດລາຍງານສະບັບນີ້ ບາງຄັ້ງໃຊ້ຄຳເອີ້ນແທນ ນັກລົງທຶນດ້ານກະສິກຳ ວ່າ ບໍລິສັດ ຫຼື ທຸລະກິດກະສິກຳ. “ນັກລົງທຶນ” ໃນບົດລາຍງານນີ້ບໍ່ໄດ້ໝາຍເຖິງນັກລົງທຶນສະຖາບັນ, ແຕ່ໝາຍເຖິງ ວິສາຫະກິດ ຫຼື ບໍລິສັດທີ່ໄດ້ຮັບສິດທິໃນການນຳໃຊ້ ຫຼື ເປັນເຈົ້າຂອງທີ່ດິນ ແລະ ຊັບພະຍາກອນ.

ລຸ່ມນີ້ ແມ່ນຜົນໄດ້ຮັບຫຼັກ ຈາກການເກັບກຳຂໍ້ມູນພາກສະໜາມ ຜ່ານການສົນທະນາແບບກຸ່ມກັບຊຸມຊົນ, ການສຳພາດນັກລົງທຶນ ແລະ ການຈັດກອງປະຊຸມກັບຫຼາຍອົງການຈັດຕັ້ງຂອງລັດໃນຂັ້ນແຂວງ ແລະ ຂັ້ນເມືອງ:

- ລະບຽບການພາຍໃນສຳລັບການລົງທຶນດ້ານກະສິກຳບາງຄັ້ງມີຂໍ້ຈຳກັດ, ກໍ່ໃຫ້ເກີດສະພາບການລົງທຶນທີ່ທ້າທາຍ. ລັດຖະບານລາວໄດ້ດຳເນີນການຫຼາຍຂັ້ນຕອນເພື່ອພະຍາຍາມແກ້ໄຂບັນດາອຸປະສັກເຫຼົ່ານີ້. ຕົວຢ່າງເຊັ່ນ ການອອກຄຳສັ່ງຂອງນາຍົກລັດຖະມົນຕີ (ຄຳສັ່ງເລກທີ 02/ນຍ, ກຸມພາ 2018) ຊຶ່ງມີວັດຖຸປະສົງເພື່ອປັບປຸງບັນດາລະບຽບການໃຫ້ມີປະສິດທິພາບ ພ້ອມທັງເພີ່ມທະວີກົນໄກການປະສານງານລະຫວ່າງໜ່ວຍງານຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ, ໃນຂະນະດຽວກັນ ລັດຖະບານຍັງປະກາດເປົ້າໝາຍໃນການປັບປຸງລະດັບຄວາມຍາກງ່າຍຂອງການເຮັດທຸລະກິດ ໃຫ້ເປັນອັນດັບສອງໂຕເລກພາຍໃນປີ 2020.

- ຄວນປຶກສາຫາລືທົ່ວໜ່ວຍເອກະຊົນໃນລະຫວ່າງການພັດທະນາກົດໝາຍ ທີ່ອາດສົ່ງຜົນກະທົບຕໍ່ພວກເຂົາ. ນັກລົງທຶນຫຼາຍຄົນຍັງບໍ່ທັນຮູ້ວ່າ ກົດໝາຍລາວໄດ້ກຳນົດໃຫ້ມີການປະກອບຄຳຄິດເຫັນແບບເປີດກວ້າງໃນໄລຍະການສ້າງກົດໝາຍ (ກົດໝາຍ ວ່າດ້ວຍການສ້າງນິຕິກຳ, 019/ສພຊ, 2012), ຊຶ່ງມັນໄດ້ຊີ້ໃຫ້ເຫັນວ່າຜູ້ສ້າງນະໂຍບາຍຈະຕ້ອງໄດ້ມີການເຜີຍແຜ່ຂໍ້ມູນຫຼາຍຂຶ້ນໃນເວລາທີ່ມີການພັດທະນາກົດໝາຍ, ເພື່ອໃຫ້ແນ່ໃຈວ່າກົດໝາຍເຫຼົ່ານີ້ຈະບໍ່ຈຳກັດການດຳເນີນງານຂອງນັກລົງທຶນດ້ານກະສິກຳຢ່າງເກີນຄວນ.

- ເນື່ອງຈາກໃນລາວ ຍັງບໍ່ທັນມີ ກົດໝາຍວ່າດ້ວຍ ສັນຍາກະສິກຳ, ນອກນີ້ ບົດແນະນຳທາງດ້ານກົດໝາຍກ່ຽວກັບວິທີການເຮັດສັນຍາແບບຍຸດຕິທຳ ກໍ່ຍັງບໍ່ທັນຄົບຖ້ວນ ຈຶ່ງເຮັດໃຫ້ການລົງທຶນດ້ານການກະສິກຳໃນຂັ້ນບ້ານ, ເມືອງ, ອົງການຈັດຕັ້ງ ແລະ ລະຫວ່າງບຸກຄົນ ບໍ່ດຳເນີນໄປລວງດຽວ. ພ້ອມດຽວກັນນັ້ນ ມັນຍັງກໍ່ໃຫ້ເກີດຄວາມຫຍຸ້ງຍາກໃນການບັງຄັບໃຊ້ກົດໝາຍ ແລະ ການຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍອີກດ້ວຍ.

- ມີຄວາມຈຳເປັນໃນການເພີ່ມການໃຫ້ບໍລິການທີ່ປຶກສາດ້ານກົດໝາຍ ແລະ ໃຫ້ຄຳແນະນຳໃນການຈັດຕັ້ງປະຕິບັດ ໃນຂັ້ນທ້ອງຖິ່ນ, ໂດຍສະເພາະ ແມ່ນໃຫ້ສາມາດເຂົ້າເຖິງໄດ້ໂດຍ ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SME). ນັກລົງທຶນໄດ້ລາຍງານວ່າພວກເຂົາສ່ວນໃຫຍ່ແມ່ນບໍ່ຮູ້ກົດໝາຍຂອງລາວກ່ຽວກັບສິ່ງແວດລ້ອມ ແລະ ມີຄວາມຕ້ອງການທີ່ຈະເຂົ້າໃຈບັນດາກົດໝາຍເຫຼົ່ານັ້ນໃຫ້ດີຂຶ້ນ. ພະນັກງານຂອງລັດກໍ່ມີຂີດຄວາມສາມາດຢ່າງຈຳກັດ ໃນການສະໜອງການບໍລິການເຫຼົ່ານີ້ໃຫ້ແກ່ບໍລິສັດຕ່າງໆ, ເນື່ອງຈາກພະນັກງານມີບໍ່ພຽງພໍ ແລະ ກໍ່ຍັງມີອຸປະສັກທາງດ້ານພາສາ.

- ບັນດາວິທີການທີ່ມີປະສິດທິພາບໃນການໃຫ້ຂໍ້ມູນແກ່ຊຸມຊົນກ່ຽວກັບການລົງທຶນດ້ານກະສິກຳ ແລະ ຄວາມສ່ຽງດ້ານສິ່ງແວດລ້ອມແມ່ນຍັງບໍ່ຊັດເຈນ. ເຖິງແມ່ນຈະມີການກຳນົດວ່າຊຸມຊົນຕ້ອງໄດ້ຮັບການແຈ້ງກ່ຽວກັບຄວາມສ່ຽງດ້ານສິ່ງແວດລ້ອມໂດຍ "ຜູ້ພັດທະນາໂຄງການ" ໃນຂະບວນການເຮັດ ESIA[2], ແຕ່ໃນປະຈຸບັນ ບໍ່ໄດ້ມີການກຳນົດການດຳເນີນ ESIA ສຳລັບຮູບແບບການເຮັດສັນຍາກະສິກຳ. ດັ່ງນັ້ນ, ນັກລົງທຶນຈຶ່ງຍັງດຳເນີນການເຜີຍແຜ່ຂໍ້ມູນຄວາມສ່ຽງດ້ານສິ່ງແວດລ້ອມ ຫຼື ອັນຕະລາຍທີ່ອາດເກີດຂຶ້ນຕໍ່ຊຸມຊົນແບບສະເພາະກິດ.

2. ອີງຕາມຄຳແນະນຳຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ (ເລກທີ 8030/ກຊສ, 2013) ຊຶ່ງກຳນົດວ່າຄວນຈະມີການປຶກສາຫາລືກັບ "ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ" ໃນລະຫວ່າງຂະບວນການ ESIA.



ສວນກ້ວຍທີ່ໄກປ່ອຍຮົກຮ້າງ ທີ່ ເມືອງສິງ, ແຂວງ ຫຼວງນ້ຳທາ
ພາຍໂດຍ: Christina Cilento

- **ອົງການຈັດຕັ້ງຂອງລັດຂັ້ນທ້ອງຖິ່ນຍັງຂາດອຸປະກອນດ້ານເຕັກນິກ ແລະ ວິທະຍາສາດ ສຳລັບທົດສອບຄຸນນະພາບຂອງດິນ, ນ້ຳ ແລະ ອາກາດ.** ການຢັ້ງຢືນຜົນກະທົບດ້ານສິ່ງແວດລ້ອມໂດຍບໍ່ນຳໃຊ້ຫຼັກຖານທີ່ພິສູດໄດ້ນັ້ນແມ່ນເປັນເລື່ອງຍາກ, ເຊິ່ງເຮັດໃຫ້ພາກລັດມີຂໍ້ຈຳກັດໃນການຄວບຄຸມບໍລິສັດຕ່າງໆ ໃຫ້ປະຕິບັດຕາມມາດຕະຖານທາງລະບຽບກົດໝາຍ ແລະ ແກ້ໄຂບັນຫາຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ການຂາດຫຼັກຖານທີ່ເປັນເປັນຮູບປະທຳກ່ຽວກັບຄວາມເສຍຫາຍດ້ານສິ່ງແວດລ້ອມ ຍັງເຮັດໃຫ້ບາງຊຸມຊົນບໍ່ເຊື່ອວ່າຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສຸຂະພາບຈາກການລົງທຶນ ເປັນເລື່ອງຈິງ.

- **ກົນໄກແກ້ໄຂຄຳຮ້ອງທຸກ (GRM) ໂດຍສະເພາະຢ່າງຍິ່ງສຳລັບການຈັດການກັບຜົນກະທົບດ້ານສິ່ງແວດລ້ອມ ຕ້ອງໄດ້ຮັບການພັດທະນາຕໍ່ໄປອີກ.** ຊຸມຊົນທີ່ໃຫ້ສຳພາດກ່າວວ່າ ພວກເຂົາມັກຈະໄດ້ຮັບຜົນກະທົບທາງລົບຈາກການລົງທຶນດ້ານກະສິກຳ ແຕ່ບໍ່ໄດ້ລາຍງານສິ່ງເຫຼົ່ານີ້ຕໍ່ລັດຖະບານ ຫຼື ນັກລົງທຶນ. ໃນຂະນະທີ່ການລົງທຶນທາງດ້ານກະສິກຳຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງຢູ່ໃນລາວ ແລະ ການເຈລະຈາຕົກລົງໃນລະດັບທ້ອງຖິ່ນສຳລັບສັນຍາກະສິກຳກໍ່ນັບມື້ນັບເພີ່ມຂຶ້ນ, ສິ່ງເຫຼົ່ານີ້ອາດສົ່ງຜົນເຮັດໃຫ້ມີຂໍ້ຂັດແຍ່ງເພີ່ມຂຶ້ນ, ດັ່ງນັ້ນການອອກແບບ ກົນໄກການແກ້ໄຂຄຳຮ້ອງທຸກທີ່ເໝາະສົມ ແມ່ນຖືເປັນບູລິມະສິດຕົ້ນຕໍ.

- **ຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບ ຈາກການນຳໃຊ້ຢາປາບສັດຕູພືດ ແມ່ນຄວາມກັງວົນຕົ້ນຕໍ.** ໃນລະຫວ່າງບໍ່ດົນມານີ້ ລັດຖະບານໄດ້ປະຕິບັດຂັ້ນຕອນເພື່ອຫຼຸດຜ່ອນຜົນກະທົບທີ່ເປັນອັນຕະລາຍຂອງສານເຄມີຈາກກະສິກຳ, ລວມທັງສົ່ງເສີມ "ການຜະລິດກະສິກຳສະອາດ ແລະ ສີຂຽວ" ແລະ ການຜະລິດກະສິກຳອິນຊີ, ພ້ອມດຽວກັນນັ້ນກໍ່ໄດ້ອອກ ດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ (ເລກທີ 258/ລບ, 2017); ແຕ່ເຖິງຢ່າງໃດກໍຕາມ ຊ່ອງຫວ່າງຂອງການປະຕິບັດນະໂຍບາຍຍັງມີຢູ່. ເຖິງແມ່ນວ່າຊຸມຊົນສ່ວນໃຫຍ່ຮັບຮູ້ເຖິງຄວາມສ່ຽງຂອງການນຳໃຊ້ຢາປາບສັດຕູພືດ ແຕ່ພວກເຂົາກໍ່ມີຍຸດທະສາດພຽງແຕ່ຈຳນວນໜ້ອຍດຽວເທົ່ານັ້ນໃນການຫຼຸດຜ່ອນຄວາມສ່ຽງ ແລະ ໃນບາງກໍລະນີດັ່ງກ່າວກໍ່ຈຳເປັນຕ້ອງມີຫຼັກຖານເພີ່ມເຕີມກ່ຽວກັບອັນຕະລາຍຂອງຢາປາບສັດຕູພືດ.

- **ການຄອບຄອງນຳໃຊ້ທີ່ດິນທີ່ໝັ້ນຄົງ ຊ່ວຍສົ່ງເສີມການລົງທຶນດ້ານກະສິກຳໃຫ້ມີຄວາມຍືນຍົງ.** ການຮັບປະກັນສິດຄອບນຳໃຊ້ທີ່ດິນໃຫ້ມີຄວາມຊັດເຈນສຳລັບ ຜູ້ຖືຄອງທີ່ດິນຂະໜາດນ້ອຍ ແລະ ນັກລົງທຶນ, ໂດຍ ການອອກເອກະສານຢັ້ງຢືນສິດນຳໃຊ້ທີ່ດິນແບບເປັນທາງການ (ເຊັ່ນ: ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ໃບຕາດິນ) ຫຼື ການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີທີ່ຊັດເຈນ[3] ຈະຊ່ວຍຮັບປະກັນຄວາມຍືນຍົງທາງດ້ານສິ່ງແວດລ້ອມໃນໄລຍະຍາວ.

## ຂໍ້ສະເໜີແນະສຳລັບຂັ້ນຕອນຕໍ່ໄປ:

1. ຜູ້ມີສ່ວນຮ່ວມໃນຂັ້ນທ້ອງຖິ່ນ, ລວມເຖິງຫົວໜ່ວຍເອກະຊົນ, ບັນດາອົງການຈັດຕັ້ງຂອງລັດໃນຂັ້ນແຂວງ ແລະ ເມືອງ, ຊຸມຊົນ ແລະ ອົງການຈັດຕັ້ງຂັ້ນຮາກຖານ ຄວນໄດ້ຮັບການປຶກສາຫາລືໃນລະຫວ່າງຂະບວນການຮ່າງກົດໝາຍ ແລະ ນະໂຍບາຍ ທີ່ຕິດພັນກັບການລົງທຶນດ້ານກະສິກຳ ແລະ ສິ່ງແວດລ້ອມ.

2. ຈຳເປັນຕ້ອງມີກອບກົດໝາຍພາຍໃນປະເທດທີ່ຄຸ້ມຄອງການເຮັດສັນຍາກະສິກຳ ເພື່ອເພີ່ມທະວີການປົກປ້ອງທາງດ້ານສິ່ງແວດລ້ອມສຳລັບທຸກໆການລົງທຶນດ້ານກະສິກຳ. ການສ້າງຄວາມອາດສາມາດໃນການເຈລະຈາ ແລະ ບັງຄັບໃຊ້ສັນຍາທີ່ຍຸຕິທຳ ກໍ່ເປັນສິ່ງຈຳເປັນເຊັ່ນດຽວກັນ.

3. ຄວນເກັບກຳ, ບັນທຶກເອກະສານ ແລະ ເຜີຍແຜ່ ບົດກໍລະນີສຶກສາ ທີ່ກ່ຽວກັບວິທີການຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຈັດການແກ້ໄຂບັນຫາຜົນກະທົບດ້ານສິ່ງແວດລ້ອມຈາກການລົງທຶນດ້ານກະສິກຳ ພ້ອມທັງນຳໃຊ້ເປັນເຄື່ອງມືຮຽນຮູ້ ສຳລັບການສ້າງນະໂຍບາຍ ແລະ ຂອດການຈັດຕັ້ງປະຕິບັດ.

4. ອົງການຈັດຕັ້ງທ້ອງຖິ່ນ ມີຄວາມຕ້ອງການດ້ານການສ້າງຄວາມອາດສາມາດ ເພື່ອເພີ່ມທະວີຄວາມຮູ້ດ້ານກົດໝາຍ, ການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ລະບຽບການ ກ່ຽວກັບສິ່ງແວດລ້ອມ ແລະ ການລົງທຶນດ້ານກະສິກຳ ໃຫ້ມີຄວາມເຂັ້ມແຂງຍິ່ງຂຶ້ນ.

5. ການສ້າງກົນໄກການແກ້ໄຂຄຳຮ້ອງທຸກແບບເປັນລະບົບ ແມ່ນມີຄວາມຈຳເປັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃຫ້ສາມາດລາຍງານຜົນກະທົບຕໍ່ສິ່ງແວດລ້ອມ, ນອກນີ້ ການສ້າງຄວາມອາດສາມາດໃຫ້ແກ່ທຸກໆກຸ່ມທີ່ກ່ຽວຂ້ອງ ແມ່ນມີຄວາມຈຳເປັນ ເພື່ອໃຫ້ສາມາດຕິດຕາມ ແລະ ແກ້ໄຂຜົນກະທົບທາງລົບໄດ້.

6. ຂະບວນການຄຸ້ມຄອງສິ່ງແວດລ້ອມພາຍຫຼັງການລົງທຶນ ຕ້ອງມີຄວາມຊັດເຈນຍິ່ງຂຶ້ນ, ນອກນີ້ຍັງມີຄວາມຈຳເປັນໃນການວາງແຜນແບບປ້ອງກັນ ເພື່ອຮັບປະກັນໃຫ້ສາມາດຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ກ່ອນການລົງທຶນດ້ານກະສິກຳຈະສິ້ນສຸດລົງ.

3. ສິດນຳໃຊ້ທີ່ດິນຕາມປະເພນີມີກຳນົດໄວ້ຢ່າງກວ້າງໆວ່າເປັນກົດລະບຽບທ້ອງຖິ່ນ, ສະຖາບັນທີ່ປົກຄອງທີ່ດິນ, ປ່າໄມ້ແລະການປະມົງທີ່ມີ ແລະໄດ້ນຳໃຊ້ດິນເປັນເວລາດົນນານ ໄດ້ຮັບຄວາມຊອບທຳທາງດ້ານສັງຄົມແລະກາຍເປັນສ່ວນໜຶ່ງຂອງສັງຄົມ (Palmer et al., 2009 cited in Ironside, 2017), ການຄອບຄອງທີ່ດິນຕາມປະເພນີປາກົດຢູ່ທົ່ວທຸກຊົນເຜົ່າທັງໝົດໃນທົ່ວຊົນນະບົດຂອງລາວ, ແລະເປັນແນວທາງໃນການນຳໃຊ້ ແລະການຄຸ້ມຄອງທີ່ດິນປະເພດຕ່າງໆ.

## ການສຳຫຼວດ ແລະ ສ້າງບັນຊີບາງໂຄງການກ່ຽວກັບສິ່ງແວດລ້ອມຊົນນະບົດ

ບັນຊີໂຄງການນີ້ ແມ່ນໄດ້ຄັດເລືອກ ແລະ ສັງລວມເອົາໂຄງການ ຈຳນວນໜຶ່ງທີ່ເຮັດວຽກກ່ຽວກັບຊົນນະບົດ ແລະ ກະສິກຳ ທີ່ມີກິດຈະກຳຕິດພັນກັບສິ່ງແວດລ້ອມ ແລະ ການລົງທຶນທາງດ້ານກະສິກຳ. ໃນການສ້າງບັນຊີໂຄງການນີ້ ທີມງານຂອງ VFI ໄດ້ເຮັດວຽກຮ່ວມກັບ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ຊຶ່ງເປັນເຄືອຂ່າຍຂອງສະມາຊິກຫຼັກ ທີ່ເປັນອົງການຈັດຕັ້ງສັງຄົມ ເກືອບ 40 ອົງກອນ ຊຶ່ງເຮັດວຽກກ່ຽວກັບປະເດັນທີ່ດິນ ແລະ ສິ່ງແວດລ້ອມໃນລາວ.

ທີມງານໄດ້ພົບກັບຕົວແທນອົງການຈັດຕັ້ງຕ່າງໆ ຈຳນວນ 23 ອົງກອນ ທີ່ມີການຈັດຕັ້ງປະຕິບັດ ຫຼື ໃຫ້ການສະໜັບສະໜູນໂຄງການ ໃນຂະແໜງການ ສິ່ງແວດລ້ອມ ແລະ ການລົງທຶນດ້ານກະສິກຳ (ຄູ່ຮ່ວມພັດທະນາ 6 ແຫ່ງ, ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ 8 ແຫ່ງ, ສະມາຄົມທີ່ບໍ່ສະແຫວງຜົນກຳໄລ 7 ແຫ່ງ, ອົງການທຸລະກິດເພື່ອສັງຄົມ 1 ແຫ່ງ ແລະ ອົງການຈັດຕັ້ງຂອງຊາວກະສິກອນ 1 ແຫ່ງ). ໃນນັ້ນມີ 17 ໂຄງການ ໄດ້ຖືກຈັດເຂົ້າຢູ່ໃນບັນຊີໂຄງການ ໂດຍໄດ້ຖືກຈັດຕັ້ງປະຕິບັດ ຫຼື ໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງ 15 ອົງການ ດັ່ງຕາຕະລາງດ້ານລຸ່ມ. ໂຄງການເຫຼົ່ານີ້ໄດ້ຖືກຄັດເລືອກເພື່ອສະແດງໃຫ້ເຫັນພາບລວມຂອງໂຄງການທີ່ມີຢູ່ໃນປັດຈຸບັນ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສ້າງບັນຊີໂຄງການແບບຄົບຖ້ວນທົ່ວເຖິງ.

| ອົງການຈັດຕັ້ງຕ່າງໆທີ່ຢູ່ໃນບັນຊີ | ສະຫຼຸບໂຄງການໂດຍຫຍໍ້ |
|---|---|
| ບໍລິສັດທີ່ປຶກສາພັດທະນາທາງດ້ານກະສິກຳ ແລະ ປ່າໄມ້ ຈຳກັດ | ການຟື້ນຟູປ່າໄມ້ໂດຍການປູກໄມ້ໄຜ່ |
| ອົງການຮ່ວມມືກັບປະເທດລາວ (CCL) | ການຕິດຕາມກວດກາ ແລະ ການສ້າງຄວາມຮັບຮູ້ໃນການນຳໃຊ້ຢາປາບສັດຕູພືດ |
| ອົງການອາຫານ ແລະ ການກະເສດ, ສະຫະປະຊາຊາດ (FAO) | ການສ້າງສິ່ງຈູງໃຈສຳລັບກະສິກຳທີ່ປາສະຈາກການທຳລາຍປ່າໄມ້ |
| GIZ | ການສຶກສາກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ການປ້ອງກັນການຕັດໄມ້ທຳລາຍປ່າ (ສອງໂຄງການ) |
| ເຄືອຂ່າຍສະມາຄົມຊຸມຊົນສີຊຽວແຂວງເຊກອງ | ສ້າງເຄືອຂ່າຍສະມາຄົມເພື່ອການອະນຸລັກແມ່ນ້ຳຂອງ |
| Helvetas | ການສົ່ງເສີມກະສິກຳ, ລວມທັງການນຳໃຊ້ຢາປາບສັດຕູພືດແບບປອດໄພ |
| ການຮ່ວມມືສາກົນດ້ານການເງິນ (IFC) | ປ່າໄມ້ທີ່ມີການຄຸ້ມຄອງແບບຍືນຍົງ / ການກະສິກຳ-ປ່າໄມ້ແບບຍືນຍົງ |
| ອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN) | ການປັບໂຕຕໍ່ການປ່ຽນແປງດິນຟ້າອາກາດໃນເຂດດິນບໍລິເວນນ້ຳ |
| ສະມາຄົມຊີວະນານາພັນລາວ | ການປົກປ້ອງຕົ້ນປາມ Palan, ຜ່ານການເຊື່ອມໂຍງຕະຫຼາດ |
| ໂຄງການບໍລິຫານລັດທາງດ້ານທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG) | ກຸ່ມການເຮັດວຽກກ່ຽວກັບການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບ |
| RECOFTC - The Center for People and Forests | ການຮ່ວມມືກັບພາກສ່ວນເອກະຊົນເພື່ອການອະນຸລັກປ່າໄມ້ |
| ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA) | ກະສິກຳແບບຍືນຍົງ / ກະສິກຳອິນຊີເພື່ອຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ (ສອງໂຄງການ) |
| SNV | ກະສິກຳແບບຍືນຍົງສຳລັບໂພຊະນາການໃນເຂດເນີນສູງ |
| ອົງການບ້ານຈຸດສຸມສາກົນ (VFI) | ການສ້າງຄວາມອາດສາມາດ ແລະ ການເຊື່ອມຕໍ່ຕະຫຼາດສຳລັບການກະສິກຳແບບ "ປອດໄພ" |
| ອົງການອະນຸລັກສັດປ່າ (WCS) | ການຜະລິດກາເຟແບບຍືນຍົງໃນເຂດປ່າສະຫງວນແຫ່ງຊາດ |

ບັນດາໂຄງການຂ້າງເທິງນີ້ໄດ້ຊີ້ໃຫ້ເຫັນ ຄວາມທ້າທາຍທີ່ຄ້າຍຄືກັນ ໃນການຈັດຕັ້ງປະຕິບັດໂຄງການຂອງພວກເຂົາ:

- ອົງການຈັດຕັ້ງບາງແຫ່ງໄດ້ຕັ້ງຂໍ້ສັງເກດວ່າຂອດການປະສານງານລະຫວ່າງຊຸມຊົນ, ພາກລັດ, ບໍລິສັດ ແລະ ອົງການຈັດຕັ້ງສັງຄົມໃນຂົງເຂດກະສິກຳ ຫຼື ການລົງທຶນດ້ານກະສິກຳຍັງມີຄວາມຫຍຸ້ງຍາກ. ແຕ່ລະກຸ່ມມີຄວາມສົນໃຈສະເພາະຂອງຕົນເອງ ແລະ ມີຄວາມຮັບຮູ້ເຖິງບັນຫາທີ່ກ່ຽວຂອງກັບສິ່ງແວດລ້ອມ ແລະ ການລົງທຶນແບບມີຄວາມຮັບຜິດຊອບ ແຕກຕ່າງກັນ.

- ໂຄງການຈຳນວນໜ້ອຍໜຶ່ງ ມີຄວາມກັງວົນເພີ່ມຂຶ້ນກ່ຽວກັບການໃຊ້ຢາປາບສັດຕູພືດ. ເຖິງວ່າພວກເຂົາໄດ້ມີການຈັດການແກ້ໄຂຜົນກະທົບທາງລົບຈາກຢາປາບສັດຕູພືດ ແຕ່ພວກເຂົາໄດ້ຊີ້ໃຫ້ເຫັນວ່າ ການປ່ຽນແປງການນຳໃຊ້ຢາປາບສັດຕູພືດນັ້ນເປັນສິ່ງທ້າທາຍ ແລະ ຍັງຕ້ອງໄດ້ພະຍາມສືບຕໍ່ສ້າງແນວທາງການປະຕິບັດແບບໃໝ່ ພ້ອມທັງສົ່ງເສີມຮ່ວມມືກັບລັດ ແລະ ບັນດາບໍລິສັດຕ່າງໆເພື່ອໃຫ້ໄດ້ຮັບຜົນສຳເລັດ.

ຄວາມຄ້າຍຄືກັນບາງປະການທາງດ້ານວິທີຈັດຕັ້ງປະຕິບັດໂຄງການ ກໍ່ສາມາດກຳນົດໄດ້ ດັ່ງລຸ່ມນີ້:

- ປະເດັນທີ່ທັງ 15 ໂຄງການເຫຼົ່ານີ້ເຮັດວຽກຫຼາຍທີ່ສຸດ ແມ່ນ ການອານຸລັກປ່າໄມ້, ການນຳໃຊ້ຢາປາບສັດຕູພືດ ແລະ ການສ້າງຄວາມອາດສາມາດ ກ່ຽວກັບການຜະລິດກະສິກຳແບບຍືນຍົງ. ມີ 3 ໂຄງການ ທີ່ເຮັດວຽກກ່ຽວກັບການມີສ່ວນຮ່ວມຂອງພາກເອກະຊົນ ເພື່ອການລົງທຶນດ້ານກະສິກຳແບບມີຄວາມຮັບຜິດຊອບ.

- ຫຼາຍໂຄງການໄດ້ລວມເອົາເຄື່ອງມືຈູງໃຈທາງດ້ານເສດຖະກິດ ສຳລັບການອະນຸລັກສິ່ງແວດລ້ອມ ຫຼື ການເຊື່ອມໂຍງຕະຫຼາດເພື່ອຂາຍສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ. ຫຼາຍອົງການໄດ້ລາຍງານວ່າຜົນປະໂຫຍດທາງດ້ານເສດຖະກິດ ແມ່ນຍັງຈຳມີຄວາມເປັນເພື່ອໃຫ້ຊຸມຊົນດຳເນີນກິດຈະກຳດ້ານສິ່ງແວດລ້ອມ ແລະ ໃນບາງກໍລະນີ ການຂາດຜົນປະໂຫຍດທາງດ້ານເສດຖະກິດສຳລັບຊຸມຊົນກໍ່ສົ່ງຜົນໃຫ້ຄວາມສົນໃຈຂອງພວກເຂົາຕໍ່ກັບໂຄງການຂອງອົງການຕ່າງໆມີໜ້ອຍລົງ.

ແຜນທີ່ຂ້າງລຸ່ມນີ້ ສະແດງໃຫ້ເຫັນການແຈກຢາຍຂອງບັນດາໂຄງການທີ່ຄຳນຶງເຖິງສິ່ງແວດລ້ອມທີ່ລວມຢູ່ໃນບັນຊີໂຄງການນີ້. ໂຄງການທີ່ໄດ້ຄັດເລືອກມານີ້ ແມ່ນໄດ້ຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ ແລະ ໃນ 17 ແຂວງຈາກທັງໝົດ 18 ຂອງປະເທດລາວ, ໂດຍບໍ່ມີໂຄງການໃດທີ່ໄດ້ລະບຸວ່າມີການດຳເນີນງານຢູ່ໃນແຂວງອັດຕະປື.



## ການລວບລວມເຄື່ອງມືການຝຶກອົບຮົມ ແລະ ຫຼັກສູດການສອນບາງຈຳນວນທີ່ກ່ຽວກັບຫົວຂໍ້ ສິ່ງແວດລ້ອມ ແລະ ການລົງທຶນ

ບົດລາຍສະຫຼຸບຫຍໍ້ສະບັບສຸດທ້າຍຂອງໂຄງການ E-RAI ໄດ້ສັງລວມບາງເຄື່ອງມືທີ່ສຳຄັນສຳລັບການຝຶກອົບຮົມ ແລະ ບັນດາວິທີການປະຕິບັດທີ່ນຳໃຊ້ໂດຍອົງການຈັດຕັ້ງຕ່າງໆໃນລາວ ເພື່ອສ້າງຄວາມອາດສາມາດສຳລັບການລົງທຶນດ້ານການກະສິກຳທີ່ມີຄວາມຮັບຜິດຊອບ. ບົດລາຍງານນີ້ໄດ້ຄັດເລືອກ ແລະ ສັງລວມເອົາເຄື່ອງມືການຝຶກອົບຮົມ ແລະ ການໃຫ້ຄວາມຮູ້ຈຳນວນໜຶ່ງ ທີ່ນຳໃຊ້ໂດຍພາກລັດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສັງຄົມ ໂດຍໄດ້ເນັ້ນໜັກ 5 ແນວທາງການປະຕິບັດການທີ່ດີໃນການຝຶກອົບຮົມ ທີ່ຈັດຕັ້ງປະຕິບັດໂດຍ 5 ຫນ່ວຍງານ ຄື: ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ, ອົງການບ້ານຈຸດສຸມສາກົນ, ໂຄງການ ProCEEd ຂອງ GIZ, ໂຄງການລິເລີ່ມ LIFE ແລະ ກອງທຶນຫຼຸດຜ່ອນຄວາມທຸກຍາກ. ຊຶ່ງໄດ້ມີການອະທິບາຍແບບລົງເລິກລາຍລະອຽດກ່ຽວກັບວິທີການເຫຼົ່ານີ້ ເປັນຕົ້ນກໍ່ແມ່ນກ່ຽວກັບ ວັດຖຸປະສົງຂອງໂຄງການ, ກິດຈະກຳ, ກຸ່ມເປົ້າໝາຍ, ເຄື່ອງມື ແລະ ວິທີການຕ່າງໆ. ສັງເກດໄດ້ວ່າ, ນອກຈາກເຄື່ອງມືທີ່ໄດ້ສັງລວມໃນບົດລາຍງານສະບັບນີ້ແລ້ວ ຍັງມີໂຄງການຝຶກອົບຮົມອື່ນໆຈຳນວນຫຼາຍຢູ່ໃນປະເທດລາວ, ເຄື່ອງມືທີ່ໄດ້ຄັດເລືອກເຫຼົ່ານີ້ ເປັນພຽງບາງຕົວຢ່າງຂອງເຄື່ອງມືທີ່ກ່ຽວຂ້ອງກັບການລົງທຶນດ້ານການກະສິກຳທີ່ມີຄວາມຮັບຜິດຊອບເທົ່ານັ້ນ.

ຄຳອະທິບາຍທາງດ້ານລຸ່ມນີ້ສະແດງໃຫ້ເຫັນເຖິງບັນດາເຄື່ອງມືການຝຶກອົບຮົມ ແລະ ໃຫ້ຄວາມຮູ້ ທີ່ດຳເນີນໂດຍຜູ້ມີສ່ວນຮ່ວມແຕ່ລະພາກສ່ວນ:

- ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ໄດ້ພັດທະນາປະຕິທິນກົດໝາຍປະຈຳປີ ເພື່ອເປັນເຄື່ອງມືສື່ສານ ໂດຍໄດ້ກັ່ນກອງເອົາບັນດາກົດໝາຍ ແລະ ນະໂຍບາຍຕ່າງໆ ກ່ຽວກັບທີ່ດິນ, ການຄຸ້ມຄອງສິ່ງແວດລ້ອມ ແລະ ການລົງທຶນໃນຮູບແບບທີ່ເຂົ້າໃຈງ່າຍ. ເມື່ອບໍ່ດົນມານີ້ LIWG ຍັງໄດ້ສ້າງປຶ້ມອ່ານເສີມກ່ຽວກັບກົດໝາຍໃນ 7 ຫົວຂໍ້ ຊຶ່ງລວມທັງ ສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອນຳໃຊ້ເຂົ້າໃນການສຶກສາຢູ່ໃນລະດັບມັດທະຍົມສຶກສາ.

- ອົງການບ້ານຈຸດສຸມສາກົນ ໄດ້ພັດທະນາເຄື່ອງມືການຝຶກອົບຮົມ ກ່ຽວກັບການລົງທຶນດ້ານການກະສິກຳທີ່ມີຄວາມຮັບຜິດຊອບ, ໂດຍສະເພາະແມ່ນກ່ຽວກັບການເຈລະຈາຕໍ່ລອງສັນຍາ ແລະ ການຍິນຍອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ເພື່ອໃຊ້ກັບທັງບໍລິສັດກະສິກຳ ແລະ ຊຸມຊົນ.

- ໂຄງການ ProCEEd ຂອງ GIZ ໄດ້ຜະລິດເຄື່ອງມືສື່ ທີ່ສ້າງຄວາມຮັບຮູ້ກ່ຽວກັບບັນຫາສິ່ງແວດລ້ອມຫຼາຍປະການ, ລວມທັງການຕັດໄມ້ທຳລາຍປ່າ ແລະ ການປ່ຽນແປງສະພາບດິນຟ້າອາກາດ. ໂຄງການດັ່ງກ່າວດຳເນີນການໃຫ້ຄວາມຮູ້ດ້ານສິ່ງແວດລ້ອມໃນລະດັບທ້ອງຖິ່ນ ແລະ ຝຶກອົບຮົມພະນັກງານຂອງລັດຢູ່ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບເຕັກນິກວິຊາການ ໃນການໃຫ້ຄວາມຮູ້ດ້ານສິ່ງແວດລ້ອມ, ໂດຍທີ່ກະຊວງດັ່ງກ່າວໄດ້ຜັນຂະຫຍາຍຄວາມຮູ້ນັ້ນລົງໄປຕາມສາຍການຈັດຕັ້ງຂອງຕົນ.

- ໂຄງການລິເລີ່ມ LIFE ເປັນໂຄງການຂອງ LIWG ໄດ້ມີທີມງານຝຶກອົບຮົມທີ່ດຳເນີນກິດຈະກຳການສ້າງຄວາມອາດສາມາດໃຫ້ກັບອົງການຈັດຕັ້ງສັງຄົມ, ລັດຖະບານ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບປະເດັນທີ່ດິນ ແລະ ການກະສິກຳ ເຊັ່ນ: ສັນຍາກະສິກຳ, ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ. ພາຍຫຼັງຈາກໄດ້ຮັບການຝຶກອົບຮົມ ຄູ່ຮ່ວມງານເຫຼົ່ານີ້ຈະສືບຕໍ່ດຳເນີນການຝຶກອົບຮົມຢູ່ໃນລະດັບຊຸມຊົນ ໂດຍໄດ້ຮັບການສະຫນັບສະຫນູນຈາກ LIFE.

- ກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສ້າງຄວາມເຂັ້ມແຂງແກ່ຊຸມຊົນໃນເຂດທຸກຍາກ ແລະ ເຂດຊົນນະບົດ ຂອງລາວ. ໂດຍການສະໜອງການຝຶກອົບຮົມກັບພະນັກງານລັດຂັ້ນທ້ອງຖິ່ນ, ຫຼັງຈາກນັ້ນພະນັກງານເຫຼົ່ານັ້ນຈະເປັນຜູ້ສະໜອງການຝຶກອົບຮົມໃຫ້ແກ່ຊຸມຊົນ ກ່ຽວກັບການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ, ກົດໝາຍສິ່ງແວດລ້ອມ ແລະ ການຄຸ້ມຄອງສັດຕູພືດ.

ຜ່ານຂະບວນການກຳນົດ ແລະ ສັງລວມໂຄງການຝຶກອົບຮົມເຫຼົ່ານີ້, ທີມງານຄົ້ນຄວ້າສາມາດເຫັນໄດ້ວ່າ ມີຫຼາຍອົງການຈັດຕັ້ງທີ່ເຮັດວຽກໃນຫົວຂໍ້ທີ່ໃກ້ຄຽງກັນ, ຍົກຕົວຢ່າງເຊັ່ນ ການເຮັດສັນຍາກະສິກຳ ຫຼື ການໃຫ້ຄວາມຮູ້ກ່ຽວກັບການນຳໃຊ້ຢາປາບສັດຕູພືດ. ນອກຈາກນີ້ຍັງເຫັນໄດ້ວ່າ ເຖິງວ່າບັນດາໂຄງການເຫຼົ່ານີ້ໄດ້ສະໜອງການຝຶກອົບຮົມໃນຫົວຂໍ້ດຽວກັນ ແຕ່ພວກເຂົາໄດ້ນຳໃຊ້ວິທີການທີ່ແຕກຕ່າງກັນ. ສິ່ງດັ່ງກ່າວນີ້ ໄດ້ຊີ້ໃຫ້ເຫັນທ່າອ່ຽງໂອກາດໃນການສ້າງແຜນການຝຶກອົບຮົມໃຫ້ເປັນລະບົບດຽວ ແລະ ໂອກາດທາງດ້ານການຮ່ວມມືໃນຫົວຂໍ້ຝຶກອົບຮົມທີ່ຄືກັນ.

ຜົນຈາກການສຶກສາກ່ຽວກັບໂຄງການລິເລີ່ມທີ່ໄດ້ຄັດເລືອກມານີ້, ທີມງານຄົ້ນຄວ້າສາມາດກຳນົດແນວທາງວິທີການ ໃນການຈັດຕັ້ງປະຕິບັດແຜນການຝຶກອົບຮົມ ແລະ ການໃຫ້ຄວາມຮູ້ດ້ານສິ່ງແວດລ້ອມ ທີ່ປະສົບຜົນສຳເລັດ ດັ່ງລຸ່ມນີ້:

- ນຳໃຊ້ວິທີການທີ່ເຂົ້າຮ່ວມໂດຍຫຼາຍພາກສ່ວນ ໃນການພັດທະນາຜະລິດຕະພັນ ໂດຍລວມເອົາ ພາກລັດ, ອົງການຈັດຕັ້ງສັງຄົມ ແລະ ອື່ນໆ ເພື່ອໃຫ້ໄດ້ຮັບການຍອມຮັບ ແລະ ຮັບຮອງຕັ້ງແຕ່ຫົວທີ;

- ຮວບຮວມເອົາເຄື່ອງມືການຝຶກອົບຮົມໂດຍອີງໃສ່ຊ່ອງຫວ່າງ ແລະ ຄວາມຕ້ອງການທີ່ມີຢູ່, ຊຶ່ງກຳນົດຜ່ານການປະເມີນ ຫຼື ການວິເຄາະ;

- ອອກແບບຫຼັກສູດໃຫ້ມີຄວາມຍືດຫຍຸ່ນໃນສະພາບແວດລ້ອມທີ່ແຕກຕ່າງກັນ, ດັດປັບແຜນການຝຶກອົບຮົມແຕ່ລະຢ່າງໃຫ້ເໝາະສົມກັບຄວາມຕ້ອງການ ແລະ ສະຖານະການຂອງແຕ່ລະກຸ່ມເປົ້າໝາຍທີ່ແຕກຕ່າງກັນ;

- ສົ່ງເສີມໃຫ້ຄູຝຶກສາມາດພັດທະນາເຄື່ອງມືຝຶກອົບຮົມໄດ້ໂດຍກົງ ເນື່ອງຈາກວ່າພວກເຂົາຮູ້ຈັກຄຸ້ນເຄີຍກັບສະພາບແວດລ້ອມໃນທ້ອງຖິ່ນ ແລະ ເປັນຜູ້ທີ່ຈະຜັນຂະຫຍາຍວິທີການຝຶກອົບຮົມໃນຂັ້ນຕໍ່ໄປ;

- ສະໜອງເວລາທີ່ພຽງພໍສຳລັບການຝຶກແອບ ແລະ ການຝຶກປະຕິບັດຕົວຈິງ ກ່ອນການລົງຈັດຕັ້ງປະຕິບັດ;

- ຜັນຂະຫຍາຍການຈັດຕັ້ງປະຕິບັດໂຄງການ ໂດຍການສະໜອງ “ການຝຶກອົບຮົມເພື່ອເປັນຄູຝຶກ” ຊຶ່ງຈະຊ່ວຍຂະຫຍາຍການເຂົ້າເຖິງໄດ້ສູງສຸດ ໂດຍນຳໃຊ້ຊັບພະຍາກອນທີ່ຈຳເປັນໜ້ອຍກວ່າ;

- ລວມເອົາກົນໄກການໃຫ້ຄຳຕຳນິຕິຊົມເຂົ້າໃນຫລັກສູດ ເພື່ອໃຫ້ຄູຝຶກສາມາດປັບປຸງວິທີການຂອງພວກເຂົາເຈົ້າໃນອະນາຄົດໄດ້.

ໄມ້ປ່ອງເຄິ່ງແປຮູບກ່ອນສົ່ງອອກໄປຂາຍທີ່ຫວຽດນາມ ທີ່ ເມືອງວຽງໄຊ, ແຂວງ ຫົວພັນ
ພາບໂດຍ: Justine Sylvester





ເມືອງວຽງໄຊ, ແຂວງ ຫົວພັນ
ພາບໂດຍ: Justine Sylvester